ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**********000***********

ອົງການໄອຍະການປະຊາຊົນສູງສຸດ

ເລກທີ 006 ອອປສ

ນະຄອນຫຼວງວຽງຈັນ, 14/03/2013

# ຄໍາແນະນໍາ
# ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ

**ເຖິງ:** ຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ, ອົງການໄອຍະການປະຊາຊົນພາກ, ອົງການໄອຍະການປະຊາຊົນແຂວງ, ນະຄອນ, ເຂດ ແລະ ອົງການໄອຍະການທະຫານ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ແລະ ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ສະບັບປັບປຸງ ປີ 2012

- ອີງຕາມ: ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງ ປີ 2009;
- ອີງຕາມ: ມາດຕາ 274 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ແລະ ມາດຕາ 369 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ສະບັບປັບປຸງ ປີ 2012;
- ອີງຕາມ: ລັດຖະດໍາລັດ ສະບັບເລກທີ 236/ປປທ ລົງວັນທີ 1 ສິງຫາ 2012 ຂອງປະທານປະເທດກ່ຽວກັບການປະກາດໃຊ້ ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງ ປີ 2012 ແລະ ລັດຖະດໍາລັດສະບັບເລກທີ 235/ປປທ ລົງວັນທີ 01 ສິງຫາ 2012 ຂອງປະທານປະເທດກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ສະບັບປັບປຸງ ປີ 2012.

ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ແລະ ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ສະບັບປັບປຸງ ປີ 2012, ຊຶ່ງປະທານປະເທດໄດ້ປະກາດໃຊ້ແລ້ວ ນັບແຕ່ວັນທີ 01 ສິງຫາ ປີ 2012, ໃຫ້ມີຄວາມຖືກຕ້ອງ ແລະ ເປັນເອກະພາບ.

**ຫົວໜ້າອົງການໄອຍະການປະຊາຊົນສູງສຸດອອກຄໍາແນະນໍາດັ່ງນີ້:**

1. ໃຫ້ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ແລະ ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ສະບັບປັບປຸງ ປີ 2012 ເລີ່ມແຕ່ວັນທີ 01 ສິງຫາ ປີ 2012 ເປັນຕົ້ນໄປ.
2. ຄະດີທີ່ເກີດຂຶ້ນກ່ອນ ຫຼື ຫລັງວັນທີ 01 ສິງຫາ 2012, ຊຶ່ງປະຈຸບັນຍັງພວມດໍາເນີນຄະດີຢູ່ແມ່ນໃຫ້ນໍາໃຊ້ ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ແລະ ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ສະບັບປັບປຸງ ປີ 2012 ເລີຍ.

3. ໃຫ້ບັນດາ ຫ້ອງການ, ຫ້ອງສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ຂອງອົງການໄອຍະການປະຊາຊົນສູງສຸດ, ຫ້ອງການອົງການໄອຍະການປະຊາຊົນພາກ, ຫ້ອງການອົງການໄອຍະການປະຊາຊົນແຂວງ, ນະຄອນ, ເຂດ ແລະ ຫ້ອງການອົງການໄອຍະການທະຫານທຸກຂັ້ນໃນຂອບເຂດທົ່ວປະເທດນຳພາຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ຢ່າງເຂັ້ມງວດ.

**ຫົວໜ້າອົງການໄອຍະການປະຊາຊົນສູງສຸດ.**